ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຄຳມ່ວນ

ເລກທີ 424 ຈຂ

ຄຳມ່ວນ, ວັນທີ 18 ພະຈິກ 2025

# ຂໍ້ຕົກລົງ
# ວ່າດ້ວຍການແຕ່ງຕັ້ງ ຄະນະຮັບຜິດຊອບຄຸ້ມຄອງ
# ອຸທິຍານທໍລະນີ ຫີນບູນ (Hin Boun Geopark) ແຂວງ ຄຳມ່ວນ.

- **ອີງຕາມ:** ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ເລກທີ 78/ສພຊ, ສະບັບລົງວັນທີ 20 ມີນາ 2025 ວ່າດ້ວຍ ການປົກຄອງ ທ້ອງຖິ່ນ (ສະບັບປັບປຸງ).
- **ອີງຕາມ:** ແຈ້ງການ ຂອງຫ້ອງວ່າການສຳນັກງານ ນາຍົກລັດຖະມົນຕີ ສະບັບເລກທີ 393/ຫສນຍ, ລົງວັນທີ 14 ມີນາ 2023 ກ່ຽວກັບ ທິດຊີ້ນຳການຈັດຕັ້ງປະຕິບັດວຽກງານ ອຸທິຍານທໍລະນີສາດ ຂອງ ສປປລາວ.

## ເຈົ້າແຂວງ ຕົກລົງ:

**ມາດຕາ 1: ທີ່ຕັ້ງ ແລະ ໂຄງປະກອບການຈັດຕັ້ງ.**

ອຸທິຍານທໍລະນີ ຫີນບູນ (ຫຼືຈະເອີ້ນຊື່ຕໍ່ໄປນີ້ວ່າ "**ຄະນະຮັບຜິດຊອບຄຸ້ມຄອງອຸທິຍານທໍລະນີ**"), ຂຽນເປັນຕົວໜັງສື ຫຍໍ້ (**ຄອທບ**) ແມ່ນໂຄງສ້າງການຈັດຕັ້ງໜຶ່ງ ທີ່ຂຶ້ນກັບກອງຄຸ້ມຄອງອຸທິຍານແຫ່ງຊາດ ພູຫີນປູນ ຂອງ ພະແນກ ກະສິກຳ ແລະ ສິ່ງແວດລ້ອມ ແຂວງຄຳມ່ວນ, ທີ່ມີຊື່ຫຍໍ້ວ່າ (ພະແນກ ກສຂ) ເປັນເສນາທິການ, ການຕິດຕາມ, ການກວດກາ ແລະ ການຈັດຕັ້ງປະຕິບັດ ວຽກງານຕ່າງໆ ຂອງອຸທິຍານທໍລະນີ ຫີນບູນ ໃຫ້ແກ່ ຄະນະຮັບຊອບຂອງແຂວງຄຳມ່ວນ, ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ, ກົມປ່າໄມ້, ພະແນກ ກະສິກຳ ແລະ ສິ່ງແວດລ້ອມແຂວງ ແລະ ບັນດາພະແນກການອື່ນໆ ທີ່ກ່ຽວຂ້ອງ ໂດຍຕາມມາດຖານເງື່ອນໄຂ ຂອງອຸທິຍານທໍລະນີໂລກແຫ່ງອົງການ ອຸຍເນັສໂກ.

**ມາດຕາ 2:** ຄະນະຊີ້ນຳລວມ ແລະ ຄະນະຮັບຜິດຊອບຄຸ້ມຄອງບໍລິຫານ ອຸທິຍານທໍລະນີຫີນບູນ ແຂວງຄຳມ່ວນມີດັ່ງນີ້:

**1) ຄະນະຊີ້ນຳລວມ:**

1. ທ່ານ ຮອງປະທານຄະນະກຳມະການປົກຄອງແຂວງ ຜູ້ຊີ້ນຳວຽກງານວັດທະນາທຳ-ສັງຄົມ — ເປັນປະທານ.
2. ທ່ານ ຮອງປະທານຄະນະກຳມະການປົກຄອງເມືອງຄູນຄຳ — ເປັນຮອງ.
3. ທ່ານ ຮອງປະທານຄະນະກຳມະການປົກຄອງເມືອງນາກາຍ — ເປັນຮອງ.
4. ທ່ານ ຮອງຫົວໜ້າ ພະແນກ ກະສິກຳ ແລະ ສິ່ງແວດລ້ອມແຂວງ — ເປັນຄະນະ.
5. ທ່ານ ຮອງຫົວໜ້າ ພະແນກ ສຶກສາທິການ ແລະ ກິລາແຂວງ — ເປັນຄະນະ.
6. ທ່ານ ຮອງຫົວໜ້າ ພະແນກ ວັດທະນະທຳ ແລະ ການທ່ອງທ່ຽວແຂວງ — ເປັນຄະນະ.
7. ທ່ານ ຮອງຫົວໜ້າ ພະແນກ ອຸດສະຫະກຳ ແລະ ການຄ້າ ແຂວງ — ເປັນຄະນະ.
8. ທ່ານ ຮອງຫົວໜ້າ ພະແນກ ການຕ່າງປະເທດແຂວງ — ເປັນຄະນະ.
9. ທ່ານ ປະທານ ຄະນະກຳມະການປົກຄອງຕາແສງ(ສາມຕາແສງຂອງພື້ນທີ່ເຂດອຸທິຍານທໍລະນີ) — ເປັນຄະນະ.
10. ທ່ານ ຮອງຫົວໜ້າ ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມເມືອງຄູນຄຳ — ເປັນຄະນະ.
11. ທ່ານ ຮອງຫົວໜ້າ ຫ້ອງການ ກະສິກຳ ແລະ ສິ່ງແວດລ້ອມເມືອງນາກາຍ — ເປັນຄະນະ.

❖ **ສິດ ແລະ ໜ້າທີ່:**

- ກຳນົດ ແຜນຍຸດທະສາດ ການພັດທະນາ ຂອງອຸທິຍານທຳລະນີ ຫີນປູນ.
- ຊຸກຍູ້, ຕິດຕາມ, ຊີ້ນຳ ແລະ ໃຫ້ຄຳແນະນຳ ດ້ານວິຊາການ ຕໍ່ກັບຄະນະຮັບຜິດຊອບຄຸ້ມຄອງອຸທິຍານທຳລະນີ ໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ທີ່ລະບຸໃນແຜນການຄຸ້ມຄອງ ອຸທິຍານທຳລະນີ ຢ່າງເປັນປົກກະຕິ.
- ຮຽກປະຊຸມປຶກສາຫາລືພາຍໃນຄະນະຊີ້ນຳລວມ, ແບ່ງປັນຄວາມຮັບຜິດຊອບ ໃນການກະກຽມ ແຕ່ລະໜ້າວຽກໃຫ້ລະອຽດຈະແຈ້ງ ເພື່ອນຳໄປຈັດຕັ້ງປະຕິບັດ.
- ພິຈາລະນາ ແລະ ສະເໜີຕໍ່ຂັ້ນເທິງ ເພື່ອຮອງຮັບເອົາບັນດາລະບຽບການ, ຂໍ້ຕົກລົງ ແລະ ບົດແນະນຳດ້ານວິຊາການຕ່າງໆ ທີ່ຕິດພັນກັບວຽກງານ ອຸທິຍານທຳລະນີ ຂອງແຂວງ.
- ເຂົ້າຮ່ວມກອງປະຊຸມຄົ້ນຄ້ວາ ແລະ ປຶກສາຫາລືດ້ານວິຊາການ ຮ່ວມກັບຄະນະຮັບຜິດຊອບຄຸ້ມຄອງບໍລິຫານ ອຸທິຍານທຳລະນີ ປະຈຳໄຕມາດ ແລະ ປະຈຳປີ ຢ່າງຕໍ່ເນື່ອງ ແລະ ກຳນົດໃຫ້ທິດທາງ ໃນການວາງແຜນຍຸດທະສາດ ການພັດທະນາ ໃນຂອບເຂດ ອຸທິຍານທຳລະນີ ຫີນປູນ.
- ມີສິດແຕ່ງຕັ້ງບຸກຄະລາກອນຂອງຕົນ ເຂົ້າໃນຄະນະຮັບຜິດຊອບຄຸ້ມຄອງ ອຸທິຍານທຳລະນີ ຫີນປູນຕາມຂັ້ນຂອງຕົນຮັບຜິດຊອບ.
- ກວດສອບ, ຢັ້ງຢືນຄວາມຖືກຕ້ອງ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດ ແຜນງານຕ່າງໆ ທີ່ກຳນົດໄວ້.
- ມີບົດບາດເປັນອົງການສະໜັບສະໜູນຊ່ວຍເຫຼືອ ແລະ ໃຫ້ຄຳແນະນຳ ຕໍ່ກັບໂຄງປະກອບການຈັດຕັ້ງທັງໝົດ ໃນການປົກຄອງ ແລະ ຄຸ້ມຄອງບໍລິຫານ ອຸທິຍານທຳລະນີ.

**2) ຄະນະຮັບຜິດຊອບຄຸ້ມຄອງບໍລິຫານ ອຸທິຍານທຳລະນີ ຫີນປູນ:**

1. ທ່ານ ທີ່ໄດ້ຮັບການແຕ່ງຕັ້ງຈາກ ຫົວໜ້າ ພະແນກ ກະສິກຳ ແລະ ສິ່ງແວດລ້ອມແຂວງ, ເປັນຫົວໜ້າ ອຸທິຍານທຳລະນີ.
2. ທ່ານ ທີ່ໄດ້ຮັບການແຕ່ງຕັ້ງ ຈາກພະແນກ ອຸດສະຫະກຳ ແລະ ການຄ້າແຂວງ, ເປັນຄະນະ ຮັບຜິດຊອບວິຊາການ ດ້ານມໍລະດົກທຳລະນີສາດ.
3. ທ່ານ ທີ່ໄດ້ຮັບການແຕ່ງຕັ້ງ ຈາກພະແນກ ວັດທະນາທຳ ແລະ ການທ່ອງທ່ຽວແຂວງ, ເປັນຄະນະຮັບຜິດຊອບວິຊາການດ້ານການທ່ອງທ່ຽວ.
4. ທ່ານ ທີ່ໄດ້ຮັບການແຕ່ງຕັ້ງ ຈາກພະແນກ ສຶກສາທິການ ແລະ ກິລາແຂວງ, ເປັນຄະນະ ຮັບຜິດຊອບວິຊາການ ດ້ານການສຶກສາ
5. ທ່ານ ທີ່ໄດ້ຮັບການແຕ່ງຕັ້ງ ຈາກພະແນກ ກະສິກຳ ແລະ ສິ່ງແວດລ້ອມແຂວງ, ເປັນຄະນະ ຮັບຜິດຊອບວິຊາການ ດ້ານສິ່ງແວດລ້ອມ.
6. ທ່ານ ທີ່ໄດ້ຮັບການແຕ່ງຕັ້ງຈາກ ພະແນກ ກະສິກຳ ແລະ ສິ່ງແວດລ້ອມ, ເປັນຄະນະ ຮັບຜິດຊອບວິຊາການ ດ້ານການກະສິກຳ, ການພັດທະນາທີ່ດິນ ແລະ ພັດທະນາຊົນນະບົດ.

❖ **ສິດ ແລະ ໜ້າທີ່:**

- ສະເໜີ ແລະ ດຳເນີນການຈັດຕັ້ງປະຕິບັດ ແຜນຍຸດທະສາດ ການຄຸ້ມຄອງ ຂອງອຸທິຍານທຳລະນີ ຫີນປູນ.
- ຄຸ້ມຄອງ ແລະ ປະສານງານ ດ້ານຊັບພະຍາກອນມະນຸດ, ດ້ານວິຊາການ ແລະ ດ້ານການເງິນ ກັບບັນດາຄູ່ຮ່ວມງານຕ່າງໆ.
- ຮັບປະກັນ ໃນການວາງແຜນ, ການຕິດຕາມ ແລະ ການປະເມີນຜົນ ໜ້າວຽກຕ່າງໆ ທີ່ໄດ້ຮັບການປະຕິບັດ.
- ປະສານງານກັບທຸກພາກສ່ວນ ທີ່ກ່ຽວຂ້ອງ (ອຳນາດການປົກຄອງທ້ອງຖິ່ນ, ຫົວໜ່ວຍເຄື່ອນໄຫວໃນທ້ອງຖິ່ນ ແລະ ປະຊາຊົນ) ເພື່ອສ້າງອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດວຽກງານທັງໝົດ ຂອງອຸທິຍານທຳລະນີ.
- ຄົ້ນຄ້ວາ, ປຶກສາຫາລື ແລະ ປະກອບຂໍ້ມູນ ກ່ຽວກັບແຫຼ່ງທຳລະນີສາດ ເພື່ອນຳສະເໜີເປັນແຫຼ່ງ ອຸທິຍານທຳລະນີໂລກ ຂອງອົງການ ອຸຍເນັດສໂກ ໃຫ້ລັດຖະບານ ເພື່ອພິຈາລະນາຮັບຮອງ.
- ຕາງໜ້າໃນການປະສານງານພົວພັນ ກັບບັນດາໜ່ວຍງານຮັບຜິດຊອບ ອຸທິຍານທຳລະນີໂລກ ຂອງອົງການ ອຸຍເນັສໂກ (UNESCO).

- ກະກຽມເອກະສານດຳເນີນການ, ເອກະສານຕ່າງໆ ທີ່ຜ່ານການຢັ້ງຢືນກວດສອບ ໂດຍຄະນະວິທະຍາສາດ ເຂົ້າມາ ສຶກສາຄົ້ນຄ້ວາ ແລະ ນຳສະເໜີອຸທິຍານທໍລະນີ ຂອງແຂວງ ທີ່ລັດຖະບານຮັບຮອງ ເພື່ອຍື່ນເຂົ້າເປັນ ອຸທິຍານທໍລະ ນີໂລກ ແຫ່ງອົງການ ອຸຍເນັດສ໌ໂກ.
- ສັງລວມ, ເກັບຮັກສາບັນຊີລາຍຊື່ ດ້ານທໍລະນີສາດ, ດ້ານວັດທະນາທຳ, ດ້ານທ່ອງທ່ຽວ, ດ້ານສິ່ງແວດລ້ອມ, ດ້ານ ການສຶກສາ ແລະອື່ນໆ ໃຫ້ກັບແຕ່ລະສະມາຊິກ ຂອງຄະນະຮັບຜິດຊອບຄຸ້ມຄອງບໍລິຫານ ອຸທິຍານທໍລະນີ.
- ຂຽນແຜນຍຸດທະສາດການພັດທະນາ ແລະ ແຜນດຳເນີນງານປະຈຳປີ ໄລຍະ 05 ປີ ໃຫ້ສອດຄ່ອງໃນແຕ່ລະ ໄລຍະ ຂອງຄະນະກຳມະການຮັບຜິດຊອບ ເພື່ອຈັດຕັ້ງປະຕິບັດວຽກງານ ອຸທິຍານທໍລະນີ.
- ຈັດກອງປະຊຸມ ສະຫຼຸບ-ລາຍງານ ຢ່າງເປັນປົກກະຕິ ປະຈຳເດືອນ, ປະຈຳ 3 ເດືອນ, ປະຈຳ 6 ເດືອນ ແລະ ປະຈຳປີ ຕໍ່ຄະນະຊີ້ນຳລວມ ເພື່ອຂໍທິດຊີ້ນຳ.
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**3) ຄະນະວິທະຍາສາດ:**

ບັນດານັກວິທະຍາສາດ ຫຼື ຜູ້ຊ່ຽວຊານ ທີ່ເຂົ້າຮ່ວມໃນຄະນະວິທະຍາສາດ ແມ່ນຈະມາຈາກສະຖາບັນການ ສຶກສາຂອງລັດ, ຈາກພາກສ່ວນເອກະຊົນ ຫຼື ຈາກສະມະຄົມທາງສັງຄົມ ແລະ ບາງບຸກຄົນຢູ່ໃນຄະນະວິທະຍາສາດ ຈະເປັນ ຄົນຕ່າງປະເທດ ທີ່ເຄື່ອນໄຫວດຳລົງຊີວິດ ຢູ່ໃນ ສປປ ລາວ.

ຄະນະວິທະຍາສາດ ຈະປະສານພົວພັນກັນຢ່າງໃກ້ຊິດ ກັບພະແນກ ກະສິກຳ ແລະ ສິ່ງແວດລ້ອມ ແຂວງ, ການຈັດຕັ້ງ ປະຕິບັດວຽກງານ ຂອງຄະນະວິທະຍາສາດ ແມ່ນຢູ່ໃນຄວາມຮັບຜິດຊອບຂອງກົມປ່າໄມ້ ເຊິ່ງເປັນ ຄະນະໜຶ່ງທີ່ປະກອບ ຢູ່ໃນໂຄງສ້າງຂອງຄະນະກຳມາທິການ ອຸທິຍານທໍລະນີ ແຫ່ງຊາດ, ສະຖາບັນການສຶກສາ ທີ່ ຕິດພັນກັບຄະນະວິທະຍາສາດ ປະກອບມີ:

1. ຄະນະ ວິທະຍາສາດ ທຳມະຊາດ
2. ຄະນະ ວິທະຍາສາດ-ສັງຄົມ
3. ຄະນະ ວິທະຍາສາດ ປ່າໄມ້
4. ຄະນະ ວິທະຍາສາດ ສິ່ງແວດລ້ອມ
5. ຄະນະ ເສດຖະສາດ ແລະ ບໍລິຫານທຸລະກິດ
6. ຄະນະ ວິສະວະກຳສາດ
7. ຄະນະ ທໍລະນີສາດ ແລະ ບໍ່ແຮ່
8. ຄະນະ ກະເສດສາດ
9. ຜູ້ຊ່ຽວຊານ ຫຼື ທີ່ປຶກສາເອກະລາດທີ່ເປັນຄົນລາວ ຫຼື ຕ່າງປະເທດທີ່ໄດ້ຮັບການຍອມຮັບ ແລະ ຖືກຮັບຮູ້.

❖ **ສິດ ແລະ ໜ້າທີ່:**

- ຊຸກຍູ້ຊ່ວຍເຫຼືອ ດ້ານວິຊາການ ແລະ ໃຫ້ຄຳແນະນຳ ຕໍ່ຄະນະຊີ້ນຳລວມ ແລະ ຄະນະຮັບຜິດຊອບໃນການຄຸ້ມ ຄອງ ບໍລິຫານ ເພື່ອຈັດຕັ້ງປະຕິບັດວຽກງານຕ່າງໆ ຂອງອຸທິຍານທໍລະນີ.
- ເປັນທີ່ປຶກສາໃຫ້ແກ່ຄະນະຊີ້ນຳລວມ ແລະ ຄະນະຮັບຜິດຊອບຄຸ້ມຄອງບໍລິຫານອຸທິຍານທໍລະນີ ກ່ຽວກັບການອະນຸ ຮັກ, ການຄົ້ນຄວ້າວິໄຈ ແລະ ການນຳໃຊ້ໃຫ້ເກີດປະໂຫຍດ ຂອງມໍລະດົກດ້ານທໍລະນີສາດ ແລະ ດ້ານວັດທະນາທຳ.
- ກວດກາ, ປັບປຸງ, ແກ້ໄຂ ຂໍ້ມູນການສຶກສາສຳຫຼວດທາງດ້ານວິທະຍາສາດ.
- ເຂົ້າຮ່ວມດຳເນີນການສຶກສາສຳຫຼວດ, ສັງລວມຂໍ້ມູນທາງດ້ານວິທະຍາສາດ ເພື່ອສະໜັບສະໜູນໃຫ້ວຽກ ງານຕ່າງໆ ຂອງອຸທິຍານທໍລະນີ ແລ້ວລາຍງານຕໍ່ ຄະນະຊີ້ນຳລວມ ແລະ ຄະນະຮັບຜິດຊອບດ້ານວິຊາການໃນ ການຄຸ້ມຄອງ ບໍລິຫານ ອຸທິຍານທໍລະນີ.
- ກວດສອບ, ຢັ້ງຢືນຄວາມຖືກຕ້ອງ ຂໍ້ມູນຕ່າງໆ ທາງດ້ານວິທະຍາສາດ.
- ເຂົ້າຮ່ວມກອງປະຊຸມປະຈຳປີ ແລະ ກອງປະຊຸມອື່ນໆ ທີ່ຄະນະຊີ້ນຳລວມ ແລະ ຄະນະຄຸ້ມຄອງ ອຸທິຍານ ທໍລະນີ ຫີນບູນ ຈັດຂຶ້ນ.
- ປະສານສົມທົບກັບອົງການຈັດຕັ້ງສາກົນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອສະໜັບສະໜູນ ດ້ານວິຊາ ການ ເຂົ້າ ໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ຂອງອຸທິຍານທໍລະນີ ຫີນບູນ.

4) ຄະນະທີ່ປຶກສາ ເຊິ່ງປະກອບມີ:

1. ອົງການຈັດຕັ້ງທາງສັງຄົມ ທີ່ເຄື່ອນໄຫວຢູ່ໃນຂອບເຂດ ອຸທິຍານທໍລະນີ ຫີນບູນ ແຂວງຄໍາມ່ວນ.
2. ຜູ້ປະກອບການ (ບ້ານພັກ, ແຫຼ່ງທ່ອງທ່ຽວ, ຮ້ານອາຫານ) ແລະ ໜ່ວຍງານພາກເອກະຊົນ ໃນຂອບເຂດ ອຸທິຍານ ທໍລະນີ ຫີນບູນ ແຂວງຄໍາມ່ວນ.
3. ກຸ່ມຜະລິດ ກະສິກໍາ - ຫັດຖະກໍາ ໃນຂອບເຂດອຸທິຍານທໍລະນີ ຫີນບູນ.

❖ **ສິດ ແລະ ໜ້າທີ່:**

- ໃຫ້ຄໍາປຶກສາ, ໃຫ້ຄໍາແນະນໍາ, ໃຫ້ຄໍາເຫັນ ກ່ຽວກັບກິດຈະກໍາໜ້າວຽກຕ່າງໆ ໃຫ້ກັບຄະນະຊີ້ນໍາລວມ ຂອງ ອຸທິຍານທໍລະນີ ຫີນບູນ ຂອງແຂວງ.
- ມີສ່ວນຮ່ວມໃນການເຄື່ອນໄຫວກິດຈະການຕ່າງໆ ຂອງອຸທິຍານທໍລະນີ ຫີນບູນ.

**ມາດຕາ 3: ແຫຼ່ງທຶນ ແລະ ການຈັດຕັ້ງປະຕິບັດ**

ແຫຼ່ງທຶນ ທີ່ໄດ້ນໍາເຂົ້າມາ ໃນການຈັດຕັ້ງປະຕິບັດວຽກງານຕ່າງໆ ຂອງອຸທິຍານທໍລະນີ ຫີນບູນ ມີດັ່ງນີ້:

1. ງົບປະມານຂອງລັດ.
2. ການປະກອບທຶນຂອງກິດຈະການ ຫຼື ໂຄງການດໍາເນີນງານ ຢູ່ໃນຂົງເຂດອຸທິຍານທໍລະນີ ຫຼື ພື້ນທີ່ໃກ້ຄຽງ ທີ່ສົ່ງຜົນກະທົບຕໍ່ພື້ນທີ່ ອຸທິຍານທໍລະນີ, ເປັນຕົ້ນແມ່ນໂຄງການ KARST ທີ່ຮັບທຶນຈາກການຮ່ວມມືຂອງຝຣັ່ງ.
3. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ.
4. ແຫຼ່ງທຶນອື່ນໆ ທີ່ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 4: ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ວັນໄຊ ພອງສະຫວັນ